Ottawa County Health Department

# ໂຣກຕັບອັກເສບຊະນິດ A [HEPATITIS A]

## ໂຣກຕັບອັກເສບຊະນິດ A ຄືຫຍັງ?

ໂຣກຕັບອັກເສບຊະນິດ A ເປັນໂຣກໃນຕັບເຊິ່ງເກີດຈາກເຊື້ອວາຍຣັສ.

## ໂຣກຕັບອັກເສບຊະນິດ A ແຜ່ລາມແນວໃດ?

ໂຣກຕັບອັກເສບຊະນິດ A ຄ້ານພົບໃນອາຈົມ (ຂີ້) ຂອງຜູ້ທີ່ເປັນໂຣກຕັບອັກເສບຊະນິດ A. ມັນອາດຈະແຜ່ລາມໃນວິທີດັ່ງຕໍ່ໄປນີ້:

- ເອົາສິ່ງໃດສິ່ງໜຶ່ງເຂົ້າປາກທີ່ມີອາຈົມຂອງຄົນເປັນໂຣກຕັບອັກເສບຊະນິດ A ຕິດຢູ່ນຳ.
- ກິນອາຫານ ແລະ ນ້ຳທີ່ມີເຊື້ອໂຣກນີ້ປົນຢູ່ນຳ.
- ໂດຍການຮ່ວມເພດທາງກົ້ນ.

## ອາການບາງຢ່າງມີຫຍັງແດ່?

ອາການອາດຈະຮ່ວມດ້ວຍ:

- ໜາວເຢືອກ
- ຄີງຮ້ອນ
- ເຈັບປວດກ້າມເນື້ອ
- ອິດເມື່ອຍຢ່າງໜັກ
- ບໍ່ຫິວເຂົ້າ
- ປັ້ນທ້ອງປວດຮາກ
- ປວດທ້ອງ
- ຕາ ແລະ ຜິວຈະເປັນສີເຫລືອງ (ຈອນດິສ)
- ບາງຄົນທີ່ເປັນໂຣກຕັບອັກເສບຊະນິດ A ນີ້ຈະບໍ່ມີອາການໃດທັງໝົດ.

ຕາມທຳມະດາແລ້ວອາການຈະປະກົດຂື້ນພາຍໃນ 15 ຫາ 50 ມື້ຫລັງຈາກຕິດແທດເຊື້ອໂຣກນີ້. ໂຣກນີ້ສາມາດເປັນນານເຖິງ 1 ຫາ 2 ອາທິດ ຫລື, ໃນກໍລະນີທີ່ເປັນໜັກ, ອາດຈະເປັນນານເຖິງຫລາຍເດືອນ.

## ຈະກວດພົບໂຣກຕັບອັກເສບຊະນິດ A ໄດ້ແນວໃດ?

ໂດຍການກວດເບິ່ງເລືອດໂດຍສະເພາະສຳລັບໂຣກຕັບອັກເສບຊະນິດ A.

## ຈະຮັກສາໂຣກຕັບອັກເສບຊະນິດ A ໄດ້ດ້ວຍວິທີໃດ?

ບໍ່ມີການຮັກສາແບບເຈາະຈົງສຳລັບໂຣກຕັບອັກເສບຊະນິດ A. ເປັນສິ່ງສຳຄັນທີ່ຕ້ອງພັກຜ່ອນຫລາຍໆ. ຄົນທີ່ເປັນໂຣກຕັບອັກເສບຊະນິດ A ຕ້ອງຫລີກລ້ຽງການດື່ມເຫລົ້າ ແລະ ສິ່ງມຶນເມົາຕ່າງໆທີ່ຈະເຮັດໃຫ້ຕັບເສຍຫາຍ.

## ຈະປ້ອງກັນຈາກໂຣກຕັບອັກເສບຊະນິດ A ດ້ວຍວິທີໃດ?

- ຄວນເອົາຢາ ອິມມິວນ ກລອບຢູລິນ ໃຫ້ຄົນທັງໝົດໃນເຮືອນກິນ ແລະ ຜູ້ທີ່ໄດ້ມີການຮ່ວມເພດນຳຄົນທີ່ຕິດແທດເຊື້ອໂຣກນີ້ເພື່ອປ້ອງກັນ ຫລື ເຮັດໃຫ້ຄວາມຮ້າຍແຮງຂອງໂຣກນີ້ລົດໜ້ອຍລົງ. ຕ້ອງກິນຢາພາຍໃນ 2 ອາທິດຫລັງຈາກຕິດແທດເຊື້ອໂຣກນີ້.
- ການລ້າງມືໃຫ້ສະອາດດີເປັນສິ່ງສຳຄັນຫລາຍ, ພິເສດແລ້ວແມ່ນຫລັງຈາກໃຊ້ຫ້ອງນ້ຳ ຫລື ປ່ຽນຜ້າອ້ອມ, ແລະ ກ່ອນກິນເຂົ້າ.
- ຜ້າເຊັດໜ້າ ແລະ ເຄື່ອງໃຊ້ໃນຫ້ອງນ້ຳຂອງຜູ້ທີ່ມີເຊື້ອໂຣກນີ້ຄວນຈະມ້ຽນໄວ້ຕ່າງຫາກຫ່າງຈາກຄົນອື່ນໆໃນຄອບຄົວ.
- ຕ້ອງລ້າງວິດ ແລະ ຂ້າເຊື້ອໂຣກທຸກໆມື້.

ໂຣກຕັບອັກເສບຊະນິດ A ສາມາດປ້ອງກັນໄດ້ໂດຍການສັກຢາຂ້າເຊື້ອໂຣກຕັບອັກເສບຊະນິດ A. ຜູ້ທີ່ເດີນທາງໄປປະເທດທີ່ມີໂຣກຕັບອັກເສບຊະນິດ A ຂັ້ນລະດັບສູງຕ້ອງສັກຢາກ່ອນ, ຮ່ວມດ້ວຍຜູ້ທີ່ມີໂຣກຕັບອັກເສບຊະນິດ B ຫລື ໂຣກຕັບອັກເສບຊະນິດ C, ຜູ້ທີ່ສັກຢາເຂົ້າທາງເສັ້ນເລືອດ, ແລະ ຜູ້ທີ່ເຮັດການຮ່ວມເພດທາງກົ້ນ ຕ້ອງສັກຢາຂ້າເຊື້ອໂຣກຄືກັນ. ເດັກນ້ອຍທັງໝົດທີ່ມີອາຍຸພໍສົມຄວນກໍຕ້ອງສັກຢານີ້ຄືກັນ.

**ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບ ໂຣກຕັບອັກເສບຊະນິດ A ໃຫ້ຕິດຕໍ່ໄປທີ່:**

Ottawa County Health Department
www.miOttawa.org
Medline Plus/National Institutes of Health
www.nlm.nih.gov/medlineplus/ency/article/000680.htm

12251 James St., Suite 400
Holland, MI 49424

ເລກໂທຣະສັບ: (616) 396-5266
ເລກແຟັກ: (616) 393-5643

ແວບໄຊ: www.miOttawa.org

# ຄວາມຈິງຕໍ່ມວນຊົນ

Ottawa County Health Department

12251 James St., Suite 400
Holland, MI  49424

ເລກໂທຣະສັບ: (616) 396-5266
ເລກແຟັກ: (616) 393-5643

ແວບໄຊ: www.miOttawa.org